## ໄປທັດສະນະສຶກສາທີ່ມຽນມາ ແລະ ຟີລິບປິນ

ໂຄງການໄດ້ສົ່ງພະນັກງານຝ່າຍລັດໄປທັດສະນະສຶກສາຖອດຖອນບົດຮຽນທີ່ປະເທດມຽນມາ ແລະ ຟີລິບປິນ ເລີ່ມແຕ່ວັນທີ 14 ຫາ 23 ສິງຫາ, ເພື່ອ ①ຮຽນຮູ້ແນວທາງການປະຕິບັດຕົວຈິງ "ລະບົບການຊ່ວຍເຫຼືອກຸ່ມນຳໃຊ້ນ້ຳ ແລະ ຊາວນາ ແລະ ການສ້າງຄວາມສຳພັນກັບຊາວນາໂດຍພະນັກງານລັດທ້ອງຖິ່ນ" ②"ການສ້າງຄວາມເຂັ້ມແຂງກຸ່ມນຳໃຊ້ນ້ຳ ແລະ ຊາວນາ".




**ຂໍ້ມູນທ້ອງຖິ່ນໃນມຽນມາ** (ພື້ນທີ່ຕົວຢ່າງເທົ່ານັ້ນ)

ພື້ນທີ່ຊົນລະປະທານ : ປະມານ 1,800ຮຕ
ໂຕເລກຂອງຜູ້ທີ່ໄດ້ຮັບຜົນປະໂຫຍດ : ປະມານ 950ຄຄ
ລະບົບຊົນລະປະທານ: ເຂື່ອນ (ສຳລັບຊົນລະປະທານ),ຫົວງານ, ຄອງເໜືອງແມ່/ຄອງເໜືອງຂັ້ນສອງ
ພືດຕົ້ນຕໍທີ່ປູກໄດ້ : ເຂົ້າ
ໂຕເລກຂອງກຸ່ມຜູ້ນຳໃຊ້ນ້ຳ : ມີ 5 ກຸ່ມ
(ສ້າງຕັ້ງໃນປີ2017-2018)

**ຂໍ້ມູນທ້ອງຖິ່ນໃນຟີລິບປິນ**

ພື້ນທີ່ຊົນລະປະທານ : ປະມານ 87,000ຮຕ
ໂຕເລກຂອງຜູ້ທີ່ໄດ້ຮັບຜົນປະໂຫຍດ : ປະມານ 62,000ຄຄ
ລະບົບຊົນລະປະທານ: ເຂື່ອນ (ສຳລັບຊົນລະປະທານ ແລະ ໄຟຟ້າ), ຫົວງານ, ຄອງເໜືອງແມ່/ຄອງເໜືອງຂັ້ນສອງ
ພືດຕົ້ນຕໍທີ່ປູກໄດ້ : ເຂົ້າ
ໂຕເລກຂອງກຸ່ມຜູ້ນຳໃຊ້ນ້ຳ : ມີ 360 ກຸ່ມ
(ສ້າງຕັ້ງໃນຊຸມປີ 1970 )

## ລາຍງານຈາກຜູ້ເຂົ້າຮ່ວມ



### 1) ທ່ານ ແກ້ວອຸດອນ ສຸລິຍະ (ຫົວໜ້າ ຂະແໜງແຜນການ ແລະການເງິນ ກປຂ)

ຂ້າພະເຈົ້າໄດ້ສັງເກດເຫັນວ່າພາກລັດໄດ້ຊ່ວຍເຫຼືອອົງກອນຜູ້ນຳໃຊ້ນ້ຳແນວໃດ ແລະ ການສ້າງຄວາມສຳພັນທີ່ດີກັບຊາວນາຢ່າງເປັນທາງການແນວໃດ.ຈຸດທີ່ສຳຄັນທີ່ສຸດແມ່ນພະນັກງານລັດຈຳເປັນຕ້ອງມີ"ຄວາມຮູ້ ແລະເຕັກນິກການປະຕິບັດຕົວຈິງກ່ຽວກັບວຽກວິຊາການເຊັ່ນ: ຊົນລະປະທານ ແລະ ກະສິກຳ" ນອກຈາກນີ້ຍັງມີ "ຄວາມສາມາດໃນການສື່ສານກັບຊາວນາ". ເບິ່ງຄືວ່າງ່າຍໆ ແຕ່ວ່າເວລາໃຊ້ພາກສະໜາມຕົວຈິງແມ່ນຍາກຫຼາຍ. ໂຄງການຂອງພວກເຮົາຈຳເປັນຕ້ອງເສີມຂະຫຍາຍວິທີການເຮັດວຽກຮ່ວມກັບຊາວນາ.



ແລກປ່ຽນຄວາມຮູ້ກັບກຸ່ມຜູ້ໃຊ້ນ້ຳ (ມຽນມາ)



### 2) ທ່ານ ນາງພອນທິບ ໄຊຍະຈັກ (ຂະແໜງແຜນການ ແລະ ການເງິນ ກປຂ)

ພະນັກງານລັດມີຄວາມສຳພັນທີ່ດີກັບຊາວນາ ແລະ ຊ່ວຍເຫຼືອຊາວນາເປັນປະຈຳ. ເຂົາເຈົ້າເອົາໃຈໃສ່ ແລະ ຮັບຟັງບັນຫາຂອງຊາວນາ. ສິ່ງສຳຄັນແມ່ນພວກເຂົາເຄົາລົບໃນຄວາມຄິດເຫັນຂອງຊາວນາ. ບັນດາພະນັກງານລັດ, ອົງກອນຜູ້ນຳໃຊ້ນ້ຳ ແລະ ຊາວນາຕ່າງກໍ່ເຂົ້າໃຈພາລະບົດບາດ ແລະ ວິໄສທັດ ຂອງໂຄງການ.ໃນການສ້າງຄວາມຮ່ວມມື,ພະນັກງານລັດ ແລະ ອົງກອນຜູ້ນຳໃຊ້ນ້ຳ ແລະ ຊາວນາຕ້ອງໄດ້ເຂົ້າໃຈໃນການປະຕິບັດພາລະກິດແຕ່ລະອັນ.



ແລກປ່ຽນຄວາມຮູ້ກັບກຸ່ມໃຊ້ນ້ຳ ແລະ ພະນັກງານລັດ
(ຟີລິບປິນ)



ການຢ້ຽມຢາມຫ້ອງການກຸ່ມຜູ້ໃຊ້ນ້ຳ
(ຟີລິບປິນ)



### 3) ເວດສະດາ ຈັນທະວົງສາ (ໜ່ວຍງານຊົນລະປະທານເມືອງໄຊບູລີ)

ພະນັກງານຊົນລະປະທານໃນປະເທດມຽນມາບໍ່ໄດ້ເຮັດວຽກພຽງແຕ່ການຊ່ວຍເຫຼືອການບຳລຸງຮັກສາຄອງນ້ຳແຕ່ ຍັງໃຫ້ຄຳແນະນຳກ່ຽວກັບເຕັກນິກການປູກຝັງ. ພວກເຂົາໄດ້ໃຫ້ຄຳແນະນຳໃນແນວທາງການປະຕິບັດໂດຍອີງໃສ່ຄວາມຄິດຂອງຊາວນາ. ພະນັກງານລັດໃນປະເທດຟີລິບປິນໄດ້ຮ່ວມມືກັບພະນັກງານໃນຂະແໜງທີ່ກ່ຽວຂ້ອງເພື່ອເພີ່ມລາຍຮັບຂອງຊາວນາ. ຍ້ອນການຊ່ວຍເຫຼືອຫຼາຍຢ່າງຈາກພະນັກງານລັດ, ອົງກອນຜູ້ໃຊ້ນ້ຳ ໄດ້ສູ້ຊົນກັບຫຼາຍກິດຈະກຳ ເຊັ່ນ ການໃຫ້ເຊົ່າເຄື່ອງຈັກການກະເສດ, ການໃຫ້ຢືມແນວພັນ ແລະ ປຸ໋ຍ, ການແນະນຳການປູກຖົ່ວຂຽວ ແລະ ອື່ນໆ. ຂ້ອຍຄິດວ່າມັນຈຳເປັນສຳຫຼັບພະນັກງານລັດເພື່ອປ່ຽນແນວຄວາມຄິດ.





ເຂື່ອນສຳລັບຊົນລະປະທານ ແລະ ຜະລິດໄຟຟ້າ
ລາຍໄດ້ຈາກການຂາຍໄຟຟ້າໃຊ້ບໍລິຫານຊົນລະປະທານ
(ຟີລິບປິນ)



ລາຍໄດ້ຈາກການລ້ຽງປາ ໃຊ້ບໍລິຫານກຸ່ມຜູ້ໃຊ້ນ້ຳ
(ຟີລິບປິນ)



ຄອງເໝືອງແມ່ ບຳລຸງຮັກສາໂດຍ ລັດຖະບານ
(ມຽນມາ)



ຄອງເໝືອງຂັ້ນສອງ ບຳລຸງຮັກສາໂດຍ ກຸ່ມຜູ້ໃຊ້ນ້ຳ
(ມຽນມາ)

* ຜົນຈາກການໄປທັດສະນະສຶກສາແມ່ນຈະໄດ້ສະຫຼຸບ ແລະ ຂຽນລົງໃນປື້ມຄູ່ມືຂອງໂຄງການ

## ລາຍງານໃນສະບັບຕໍ່ໄປ (ປະມານຕົ້ນເດືອນ ຕຸລາ)

ພະນັກງານຂະແໜງຊົນລະປະທານໄດ້ໄປເບິ່ງໂຮງງານສ້ອມແປງມໍເຕີ້ເປັນເວລາ 1 ອາທິດ ແລະ ໄດ້ຮັບການຝຶກອົບຮົມກ່ຽວກັບເຕັກນິກການສ້ອມແປງຈາກນາຍຊ່າງເພື່ອການພັດທະນາຄວາມສາມາດ. ພວກເຮົາຈະລາຍງານໃນສະບັບຕໍ່ໄປ


ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)